## ສສຊ ເຂດ III ລົງພົບປະປະຊາຊົນ 4 ເມືອງ

*(ວຈ): ໃນລະຫວ່າງວັນທີ 21 ກໍລະກົດ - 20 ສິງຫາ 2010 ທີ່ຜ່ານມາທ່ານ ນາງ ລັດສະໝີ ມິ່ງບຸບຜາ ສະມາຊິກສະພາແຫ່ງຊາດ ຫົວໜ້າຄະນະ ຜູ້ປະຈຳການ ຫ້ອງວ່າການຄະນະສະມາຊິກສະພາແຫ່ງຊາດ ເຂດ III ແຂວງຫຼວງນ້ຳທາ ພ້ອມດ້ວຍຫົວໜ້າຫ້ອງວ່າການ ຄະນະ ສສຊ ເຂດ III ໄດ້ລົງເຄື່ອນໄຫວ ພົບປະພໍ່ແມ່ປະຊາຊົນ ເພື່ອເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VI.

ໃນໂອກາດດັ່ງກ່າວໄດ້ລົງເຄື່ອນໄຫວ ຢູ່ 4 ເມືອງມີ 16 ຈຸດ ມີ 42 ບ້ານ ເຊິ່ງມີຫົວໜ້າພະແນກ ຮອງພະແນກ ເຈົ້າເມືອງ ຄະນະປະຈຳພັກເມືອງ ພະນັກງານ ທະຫານ ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ເຂົ້າຮ່ວມຮັບຟັງ 1.650 ຄົນ.

ໃນການລົງເຄື່ອນໄຫວຄັ້ງດັ່ງກ່າວນອກຈາກຍົກໃຫ້ເຫັນເນື້ອໃນຈິດໃຈ ຜົນສຳເລັດຂອງກອງປະຊຸມສະໄໝ ສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VI ແລ້ວທ່ານຍັງໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ໄດ້ປະກອບຄຳຄິດຄຳເຫັນສະເໜີຂໍ້ຂ້ອງໃຈຕ່າງໆ ຕໍ່ ສສຊ ເພື່ອນຳໄປພິຈາລະນາ ແກ້ໄຂໃນກອງປະຊຸມເທື່ອຕໍ່ໄປ.